Lao Country

ໂຮງຮຽນ
ມັດທະຍົມສຶກສາສົມບູນວຽງຈັນ
ເລກທີ 199
ວັນທີ 11 MAY 200

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

ເລກທີ.....538...../ສສ.ສບ/2002

ວັນທີ.......22 APR 2002.........

# ຫລັກການລວມໃນການກວດກາ ແລະ ສອບເສັງ ສຳລັບ ໂຮງຮຽນສາມັນສຶກສາ ຂອງ ສ . ປ . ປ. ລາວ

## ພາກທີ I

## ວ່າດ້ວຍຈຸດປະສົງ

1. ໃຫ້ໂຮງຮຽນສາມັນສຶກສາມີມາດຕະຖານ, ລະບຽບແບບແຜນເອກະພາບກັນໃນຂອບເຂດທົ່ວປະເທດ.
2. ໃຫ້ຄູແລະນັກຮຽນມີຄວາມຮູ້, ຄວາມສາມາດແລະທັດສະນະຄະຕິໃນການສິດສອນ- ຮ່ຳຮຽນ ແລະມີຄວາມເປັນເອກະພາບກັນໃນການປະຕິບັດໂຄງການຫລັກສູດສາຍສາມັນສຶກສາ.
3. ໃຫ້ການສິດສອນ- ຮ່ຳຮຽນມີຄຸນນະພາບທີ່ດີຂຶ້ນ.

## ພາກທີ II

## ວ່າດ້ວຍການກວດກາ ແລະ ການສອບເສັງເລື່ອນຊັ້ນ

### ໝວດ1. ການກວດກາ.

ຫຼັກການຄຸ້ມຄອງໂຮງຮຽນສາມັນສຶກສາໄດ້ກຳນົດວ່າ ສົກຮຽນໜຶ່ງແບ່ງອອກເປັນ 2 ພາກຮຽນເອີ້ນວ່າ ພາກຮຽນທີ I ແຕ່ເດືອນ ກັນຍາ (9) ເຖິງ ເດືອນມັງກອນ(1) , ພາກຮຽນ ທີ່ II ແຕ່ເດືອນ ກຸມພາ( 2) ເຖິງເດືອນ ພຶດສະພາ ( 5). ສະເພາະເດືອນມິຖຸນາ (6) ນັ້ນເປັນໄລຍະທວນຄືນສອບເສັງ ເລື່ອນຊັ້ນ ແລະຈົບຊັ້ນ.

<u>ການກວດກາ</u> ແມ່ນວິທີການໜຶ່ງຂອງການວັດຜົນການສຶກສາ ເຊິ່ງຜູ້ສອນເປັນຜູ້ຮັບຜິດຊອບແລະປະຕິບັດໂດຍກົງເພື່ອຕີລາຄາຜົນ ການຮຽນຂອງນັກຮຽນທີ່ຕົນສອນ, ເປັນການຊຸກຍູ້ໃຫ້ຄູ ແລະ ນັກຮຽນ ບຸກບືນ ເພື່ອປັບປຸງການສອນ - ການຮຽນໃຫ້ມີຄຸນນະພາບດີຂຶ້ນຢ່າງຕໍ່ເນື່ອງ, ແລະ ອີກດ້ານໜຶ່ງ

# ໝວດ3. ຫລັກການໃຫ້ຄະແນນ ແລະ ການລວມຄະແນນ .

## 1. ການໃຫ້ຄະແນນ.

ເພື່ອວັດແທກ ແລະ ຕີລາຄາຜົນຂອງການຮ່ຳຮຽນ, ການເຝິກຝົນ ຫຼໍ່ຫຼອມຂອງນັກຮຽນແຕ່ລະຄົນໃຫ້ຊັດເຈນ ແລະ ໜັກແໜ້ນ, ຈຶ່ງນຳໃຊ້ ລະບົບການໃຫ້ຄະແນນແຕ່ 0 ເຖິງ 10 ເຊິ່ງແຕ່ລະຄະແນນ ໄດ້ມີຄຸນຄ່າ ແລະ ຄວາມໝາຍລະອຽດດັ່ງລຸ່ມນີ້:

| ຄະແນນເປັນຕົວເລກ | ຄວາມໝາຍ |
|---|---|
| 9-10 | ດີເລີດ |
| 7-8 | ດີ/ ເກັ່ງ |
| 5-6 | ກາງ / ພໍໃຊ້ |
| 3-4 | ອ່ອນ |
| 1-2 | ອ່ອນຫຼາຍ |
| 0 | ໃຊ້ບໍ່ໄດ້ |

## 2. ການລວມຄະແນນ.

ການຄິດໄລ່ ຄະແນນລວມ ຫຼື ຄະແນນສະເລ່ຍ ແມ່ນຄິດໄລ່ສະເພາະແຕ່ວິຊາໃດ ວິຊານັ້ນ (ບໍ່ໃຫ້ລວມ ແລະ ສະເລ່ຍຄະແນນຂອງໝົດທຸກວິຊາເຂົ້າກັນ ).

(1) ຄະແນນລວມ ແມ່ນຜົນບວກຂອງຄະແນນກວດກາ ແລະ ສອບເສັງທັງຫມົດ ທີ່ນັກຮຽນໄດ້ຮັບໃນວິຊາໜຶ່ງ ໆ.

(2)ຄະແນນສະເລ່ຍຂອງວິຊາແມ່ນຜົນບວກຂອງຄະແນນສະເລ່ຍຂອງຄະແນນກວດກາບວກຄະແນນສອບເສັງແລ້ວຫານໃຫ້ສອງ(2).

(3)ເພື່ອຈັດລຳດັບທີ່ຂອງນັກຮຽນ ໃນແຕ່ລະເດືອນ,ແຕ່ລະພາກຮຽນຫຼືແຕ່ລະປີຮຽນ,ໃຫ້ເອົາຄະແນນສະເລ່ຍ ຂອງແຕ່ລະວິຊາມາລວມເຂົ້າກັນ ແລ້ວຫານໃຫ້ຈຳນວນວິຊາ ທີ່ໄດ້ກວດກາ ຫຼື ສອບເສັງເປັນຄະແນນສະເລ່ຍລວມ ແລ້ວຈັດລຳດັບທີ່.

(4)ການໃຫ້ຄະແນນໃນເວລາກວດກາ, ສອບເສັງ ຫລື ການສະເລ່ຍຄະແນນ ເພື່ອສະແດງຜົນດ້ານການຮຽນຂອງວິຊາໜຶ່ງໆ ນັ້ນ ໃຫ້ເຮັດເປັນເລກຖ້ວນ ໃນກໍລະນີຜົນສະເລ່ຍຫາກເສດ ໃຫ້ຮັກສາເສດໄວ້. ໃນການສອບເສັງເລື່ອນຊັ້ນ,ຈົບຊັ້ນຫລືການສະເລ່ຍຄະແນນປະຈຳປີຫາກເສດໃຫ້ປະຕິບັດຫລັກການດັ່ງນີ້:

- ເສດແຕ່ 0,49 ລົງມາໃຫ້ຖອຍລົງມາລຸ່ມ ຕົວຢ່າງ 7,49 ໃຫ້ ເປັນ 7
- ເສດແຕ່ 0,50 ຂຶ້ນໄປໃຫ້ຍົກຂຶ້ນໄປເທິງ ຕົວຢ່າງ 8,50 ໃຫ້ເປັນ 9

(3)ຜູ້ທີ່ ຖືເບົາຕໍ່ການເຝິກຝົນຫລໍ່ຫລອມຕົນເອງ, ບໍ່ປະຕິບັດ ລະບຽບວິໄນທີ່ທາງໂຮງຮຽນວາງໄວ້,ບໍ່ນັບຖືຄູອາຈານ ແລະ ສາຍການຈັດຕັ້ງ , ເສລີຊະຊາຍ , ເສບສິ່ງເສບຕິດ,ຄູອາຈານຕັກເຕືອນບໍ່ຟັງໄດ້ຄະແນນຄຸນສົມບັດ ຫລຸດ 5 .

(4) ຜູ້ທີ່ມີຄະດີ ຕ້ອງໂທດ ຍັງບໍ່ທັນພົ້ນເຂດຝາກໂທດ .

ປະເພດທີ່2. ນັກຮຽນຜູ້ທີ່ໄດ້ເລື່ອນຊັ້ນໂດຍບໍ່ຕ້ອງຜ່ານການສອບເສັງປະກອບມີເງື່ອນໄຂດັ່ງນີ້ :

ຜູ້ທີ່ໄດ້ຮຽນທຸກວິຊາ ເປັນປົກກະຕິຕະຫລອດສົກຮຽນ ຕາມໂຄງການຫລັກສູດທີ່ໄດ້ກຳນົດໄວ້ ແລະ ຄະແນນສະເລ່ຍປະຈຳປີຂອງແຕ່ລະວິຊາ ໄດ້ຄະແນນ 5 ຂຶ້ນ ໄປ ຫມົດທຸກວິຊາຫລື ມີ 1 ວິຊາເທົ່ານັ້ນ ຫລຸດ5.

ປະເພດທີ່ 3 ນັກຮຽນຜູ້ທີ່ຕ້ອງໄດ້ຜ່ານການສອບເສັງເລື່ອນຊັ້ນປະກອບມີເງື່ອນໄຂດັ່ງນີ້:

ນັກຮຽນຜູ້ທີ່ໄດ້ຄະແນນສະເລ່ຍປະຈຳປີຂອງ2ວິຊາຂຶ້ນໄປ ຫລຸດ 5 ຕ້ອງໄດ້ເສັງຄືນໃນວິຊາທີ່ຄະແນນສະເລ່ຍປະຈຳປີ ຫລຸດ 5ເທົ່ານັ້ນ ພາຍຫລັງການສອບເສັງຄືນຖ້າໄດ້ຄະແນນ 5 ຂຶ້ນໄປຫມົດທຸກ ວິຊາ ຖືວ່າໄດ້ເລື່ອນຊັ້ນ ຫລື ຖ້າຍັງຕົກອີກ1 ວິຊາກໍ່ຍັງໃຫ້ໄດ້ເລື່ອນຊັ້ນ;ແຕ່ຖ້າຕົກອີກ 2 ວິຊາຂຶ້ນໄປແມ່ນໃຫ້ຄ້າງຫ້ອງ .

2. ສຳຫລັບນັກຮຽນ ຊັ້ນສຸດທ້າຍຂອງຊັ້ນຮຽນ ( ປ 5 .ມ3. ມ6 ).

ເມື່ອຮອດທ້າຍປີຮຽນຂອງແຕ່ລະສົກຮຽນ ສະພາໂຮງຮຽນ ຕ້ອງໄດ້ຄົ້ນຄວ້າ ຕີລາຄາ ແລະ ຕັດສິນຜົນການຮຽນ ຂອງນັກຮຽນ ແລ້ວແຍກອອກເປັນ2 ປະເພດຄື:

ປະເພດທີ່ 1 ນັກຮຽນຜູ້ທີ່ບໍ່ມີເງື່ອນໄຂເຂົ້າສອບເສັງຈົບຊັ້ນຮຽນ :ຖ້າຜູ້ໃດຖືກ1ໃນ4ເງື່ອນໄຂລຸ່ມນີ້ແມ່ນບໍ່ມີເງື່ອນໄຂເຂົ້າສອບເສັງຈົບຊັ້ນຮຽນ.

(1) ຜູ້ທີ່ຮຽນອ່ອນເກີນໄປຈຳນວນຄະແນນສະເລ່ຍ 2/3 (ສອງສ່ວນສາມ) ຂອງຈຳນວນ ວິຊາຮຽນ ທັງຫມົດ ໃນສົກຮຽນ ຫລຸດ5 ( ນັບທັງຄະແນນສອບເສັງພາກຮຽນທີ່ 1 ແລະ ທີ່ 2 ) .

(2) ຜູ້ທີ່ຂາດຮຽນ ແຕ່ 30 ວັນຂຶ້ນໄປ ພາຍໃນ ສົກຮຽນ ຫນຶ່ງ ( ລວມວັນຂາດທັງຫມົດ ໂດຍຖືເອົາ 6 ຊົ່ວໂມງໃດນັບເປັນວັນຫນຶ່ງ ). ນອກຈາກກໍລະນີເຈັບເປັນ ນອນໂຮງຫມໍມີໃບຢັ້ງຢືນຂອງແພດ ອາດຈະໂຍະຍານໄດ້ 35 ວັນ ນັບທັງວັນຂາດ ໂຮງຮຽນ ໃນກໍລະນີອື່ນ ໆ ພ້ອມ .

(3)ຜູ້ທີ່ ຖືເບົາຕໍ່ການເຝິກຝົນຫລໍ່ຫລອມຕົນເອງ, ບໍ່ປະຕິບັດ ລະບຽບວິໄນທີ່ທາງໂຮງຮຽນວາງໄວ້,ບໍ່ນັບຖືຄູອາຈານ ແລະ ສາຍການຈັດຕັ້ງ , ເສລີຊະຊາຍ , ເສບສິ່ງເສບຕິດ,ຄູອາຈານຕັກເຕືອນບໍ່ຟັງໄດ້ຄະແນນຄຸນສົມບັດ ຫລຸດ 5 .

(4)ຜູ້ທີ່ມີຄະດີ ຕ້ອງໂທດ ຍັງບໍ່ທັນພົ້ນເຂດຝາກໂທດ .

ປະເພດທີ່ 2. ນັກຮຽນ ຜູ້ທີ່ມີເງື່ອນໄຂ ເຂົ້າສອບເສັງຈົບຊັ້ນຮຽນ:

ກ່ອນເຖິງມື້ສອບເສັງນັກຮຽນຜູ້ທີ່ມີເງື່ອນໄຂທຸກຄົນຈະຕ້ອງໄດ້ຮັບບັດເຂົ້າຫ້ອງສອບເສັງຕິດຮູບຜູ້ກ່ຽວໂດຍຄະນະກຳມະການຮັບຜິດຊອບການສອບເສັງ.

- ຮອງປະທານ 1 ທ່ານ ( ຫົວໜ້າຫລືຮອງຫົວໜ້າພະແນກ ສຶກສາ ປະຈຳແຂວງ,ກຳແພງນະຄອນ ແລະເຂດພິເສດ) .
- ຄະນະ 3-4 ທ່ານ ( ຄະນະຂະແໜງສາມັນແລະຄະນະຄູສຶກສານິເທດມັດທະຍົມ) .
- ກອງເລຂານຸການ 2-4 ທ່ານ .

1.3 ຄະນະກຳມະການຮັບຜິດຊອບລວມ ແລະ ຕັດສິນການສອບເສັງຈົບຊັ້ນ ມ.6

ລັດຖະມົນຕີວ່າການກະຊວງສຶກສາທິການ ເປັນຜູ້ແຕ່ງຕັ້ງປະທານ ແລະ ຄະນະກຳມະການ ຊີ້ນຳ ລວມແລະ ຕັດສິນການສອບເສັງຈົບຊັ້ນຂັ້ນສູນກາງ( ຂັ້ນກະຊວງ ) ແລະ ຂັ້ນແຂວງ ຕາມການ ສະເໜີຂອງຫົວໜ້າກົມສາມັນສຶກສາ ໂດຍມີການສົມທົບກັບ ອຳນາດການປົກຄອງແຂວງ, ກຳແພງ ນະຄອນ, ແລະ ເຂດພິເສດແລະພະແນກສຶກສາທີ່ກ່ຽວຂ້ອງ , ເພື່ອໃຫ້ການສອບເສັງເປັນເອກະພາບ ທົ່ວປະເທດ ພາຍໃຕ້ການຊີ້ນຳຂອງກະຊວງສຶກສາທິການ .

1.3.1 ຄະນະກຳມະການຮັບຜິດຊອບລວມແລະຕັດສິນການສອບເສັງຈົບຊັ້ນ ມ.6ຂັ້ນແຂວງປະກອບດ້ວຍ:

- ປະທານ 1 ທ່ານ (ທ່ານຮອງເຈົ້າ ແຂວງ ,ຮອງເຈົ້າຄອງກຳແພງນະຄອນ, ແລະຮອງ ຫົວໜ້າ ຄະນະປົກຄອງເຂດພິເສດ ) .
- ຮອງປະທານ 2 ທ່ານ ( ຫົວໜ້າຫລືຮອງຫົວໜ້າພະແນກສຶກສາປະຈຳແຂວງ , ກຳແພງນະຄອນ ແລະເຂດພິເສດ ແລະ ຜູ້ຕາງໜ້າຈາກກະຊວງສຶກສາທິການ ).
- ຄະນະ 12 ທ່ານ ຈາກພະແນກສຶກສາປະຈຳແຂວງ,ກຳແພງນະຄອນ, ເຂດພິເສດ, ຫົວໜ້າຂະ ແໜງສາມັນ, ຄະນະຄູສຶກສານິເທດມັດທະຍົມ ວິຊາການຮັບຜິດຊອບກວດບົດ ແຕ່ ລະວິຊາວິຊາ ລະ1 ທ່ານ (ສຳລັບແຂວງໃຫຍ່ອາດມີຫລາຍກວ່ານີ້ ໄດ້ຕາມຄວາມ ເໝາະສົມ)
- ກອງເລຂານຸການ 3-5 ທ່ານ

1.3.2 ຄະນະຮັບຜິດຊອບຊີ້ນຳລວມແລະຕັດສິນການສອບເສັງຈົບຊັ້ນ ມ.6 ຂັ້ນສູນກາງ ( ກະຊວງ ) ປະກອບດ້ວຍ.

- ປະທານ 1 ທ່ານ ( ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ )
- ຮອງປະທານ 2 ທ່ານ (ຫົວໜ້າແລະຮອງຫົວໜ້າກົມສາມັນສຶກສາ)
- ຄະນະ4ທ່ານ(ຫົວໜ້າ,ຮອງຫົວໜ້າພະແນກມັດທະຍົມສຶກສາແລະພະນັກງານວິຊາການ)
- ກອງເລຂານຸການ 2-3 ທ່ານ.

2. ການອອກຫົວບົດສອບເສັງ

2.1 ຊັ້ນປະຖົມສຶກສາ .

ຫ້ອງການສຶກສາປະຈຳເມືອງ ເປັນຜູ້ຮັບຜິດຊອບອອກຫົວບົດສອບເສັງໂດຍມີຄະນະຄູສຶກສານິເທດ ຊັ້ນປະຖົມ,ພະນັກງານວິຊາການຂອງໜ່ວຍງານປະຖົມ,ອາຈານຜູ້ຊົງຄຸນນະວຸດທິໃນໂຮງຮຽນປະຖົມ ຈຳນວນໜຶ່ງເຂົ້າຮ່ວມຕາມຄວາມເໝາະສົມ.

(4)ມີສິດເດັດຂາດ ໃນການຕີລາຄາແລະການຕັດສິນການສອບເສັງຈົບຊັ້ນ ຂອງນັກຮຽນໃນທົ່ວແຂວງແລະທົ່ວເມືອງຂອງຕົນ.

(5)ເປັນຜູ້ຖືກລົງຍ້ອງຍໍ ແລະ ປະຕິບັດວິໄນຕໍ່ຄະນະກຳມະການ ແລະ ນັກສອບເສັງທີ່ລະເມີດຕໍ່ກົດລະບຽບການສອບເສັງຕາມແຕ່ກໍລະນີ.

## ໝວດ2. ກົດລະບຽບການສອບເສັງ.

1. ກົດລະບຽບການສອບເສັງ ຂອງນັກສອບເສັງ.

(1)ນັກສອບເສັງຕ້ອງມາຮອດສູນສອບເສັງ ແລະຫ້ອງສອບເສັງໃຫ້ທັນເວລາຕາມທີ່ ຄະນະກຳມະການໄດ້ແຈ້ງໄວ້ລ່ວງໜ້າ .

(2)ນັກສອບເສັງຕ້ອງເຂົ້າຫ້ອງສອບເສັງ ກ່ອນເວລາສອບເສັງ 15 ນາທີ.ນັກສອບເສັງທີ່ມາຮອດຫ້ອງສອບເສັງຊ້າກວ່າ 15 ນາທີ ,ໂດຍບໍ່ມີເຫດຜົນ.ຈະບໍ່ຖືກຮັບເອົາເຂົ້າສອບເສັງໃນວິຊານັ້ນ.

(3)ນັກສອບເສັງຕ້ອງກຽມເຄື່ອງຮັບໃຊ້ການສອບເສັງ ອັນຈຳເປັນໃຫ້ຄົບຖ້ວນກ່ອນເຂົ້າຫ້ອງ ສອບເສັງເຊັ່ນ ປາກກາ/ບິກ , ໄມ້ບັນທັດ,ສໍດຳ,ຢາງລຶບ,ວົງວຽນ ຫລື ຊຸດເລຂາຄະນິດຫ້າມນຳເອົາຈັກຄິດໄລ່ເລກ,ຕາຕະລາງທາດມູນເຄມີ,ຕາຕະລາງຄິດໄລ່ ແບບຕັ້ງ,ສິ່ງພິມຕ່າງໆ,ຮູບພາບ,ແຜນທີ່, ໜັງສືພິມ,ວາລະສານແລະ ອື່ນໆທີ່ບໍ່ໄດ້ຮັບອະນຸຍາດເຂົ້າໃນຫ້ອງສອບເສັງຢ່າງເດັດຂາດ ກຳມະການອະນຸຍາດໃຫ້ນັກສອບເສັງໃຊ້ປາກກາ/ບິກ ໂດຍໃຊ້ນ້ຳເມິກສີດຳ ແລະ ສີຟ້າເທົ່ານັ້ນ ສ່ວນສີ ອື່ນໆຫ້າມໃຊ້ນອກຈາກກໍລະນີພິເສດທີ່ກຳມະການອະນຸມັດ.

(4)ກ່ອນເຂົ້າຫ້ອງສອບເສັງ ນັກສອບເສັງຈະຖືກເອີ້ນຊື່ເຂົ້າຫ້ອງສອບເສັງເທື່ອລະຄົນ( ຕາມລຳດັບເລກໂຕະຂອງນັກສອບເສັງ) ,ຖືກກວດບັດເຂົ້າຫ້ອງສອບເສັງ(ທີ່ຕິດຮູບຜູ້ກ່ຽວ),ຖືກກວດຄົ້ນໂຕຢ່າງລະອຽດເພື່ອບໍ່ໃຫ້ເຊື່ອງຊ້ອນເອົາປຶ້ມຮຽນເຂົ້າໄປກ່າຍ ໃນຫ້ອງ ສອບເສັງ.

(5)ເມື່ອນັກສອບເສັງເຂົ້າຫ້ອງສອບເສັງແລ້ວຕ້ອງນັ່ງໃຫ້ຖືກຕາມເລກໂຕະຂອງຕົນທີ່ກຳມະການໄດ້ຂຽນໃສ່ໂຕະໄວ້, ເວັ້ນແຕ່ໃນກໍລະນີນັກສອບເສັງຜູ້ທີ່ກຳມະການສົງໄສ ແລະ ຄົ້ນໄດ້ປຶ້ມຮຽນທີ່ຈະເອົາເຂົ້າໃນຫ້ອງສອບເສັງຈະຖືກຈັດໃຫ້ນັ່ງໂຕະໂດຍສະເພາະຕ່າງຫາກ.

(6)ເມື່ອກຳມະການຂຽນຫລືມອບຫົວບົດສອບເສັງໃຫ້ນັກສອບເສັງແລ້ວ ກຳມະການຈະບໍ່ໄດ້ ອະທິບາຍເພີ່ມເຕີມ ຫ້າມນັກສອບເສັງສົນທະນາກັນ, ຫ້າມຢືມເຄື່ອງນຳກັນ, ຫ້າມກ່າຍກັນ ,ຜູ້ທີ່ເອົາບົດໃຫ້ໝູ່ກ່າຍຈະມີຄວາມຜິດເທົ່າກັບຜູ້ກ່າຍ.

(7)ຖ້ານັກສອບເສັງມີຄວາມຕ້ອງການ ລຸກຈາກບ່ອນນັ່ງ ຫລື ມີທຸລະອັນຈຳເປັນ, ຕ້ອງໄດ້ຂໍອະນຸຍາດຈາກກຳມະການຍາມຫ້ອງກ່ອນ, ເມື່ອໄດ້ຮັບອະນຸຍາດແລ້ວຈຶ່ງປະຕິບັດ, ແຕ່ເວລາກັບຄືນມາກໍຕ້ອງກວດຄົ້ນຄືນອີກ.

(8)ຫ້າມນັກສອບເສັງຂີດໝາຍສິ່ງໃດສິ່ງໜຶ່ງໃສ່ບົດຕອບ ຫລື ບົດສອບເສັງທີ່ຈະເປັນສັນຍາລັບແກ່ກຳມະການກວດບົດສອບເສັງ.

( 5.7) ເວລາຂຽນຫລື ມອບຫົວບົດໃຫ້ນັກສອບເສັງແລ້ວຫ້າມອະທິບາຍເພີ່ມເຕີມ.

( 5.8) ເວລາດຳເນີນການສອບເສັງຫ້າມກະທຳແນວໃດແນວໜຶ່ງ ຫລືສິ່ງສຽງດັງ ທີ່ເປັນການລົບກວນນັກສອບເສັງ ແລະ ຫ້າມສູບຢາໃນຫ້ອງສອບເສັງ.

(5.9) ເກັບບົດຕອບແລ້ວຕ້ອງກວດກາຈຳນວນບົດຕອບໃຫ້ຄົບຖ້ວນ, ການຂຽນຊື່ ແລະນາມສະກຸນ,ການຂຽນເລກໂຕະ ແລະ ຈັດລຽງລຳດັບເລກໂຕະແລະ ເຊັນຢັ້ງຢືນ ໃສ່ແຕ່ລະໃບເຈັ້ຍ ແລ້ວ ສົ່ງໃຫ້ ກອງເລຂານຸການ ຫລື ປະທານສອບເສັງໃຫ້ທັນເວລາ,ເພື່ອປະທານຈະໄດ້ໃສ່ເລກລັບແລ້ວຕັດຫົວຂວັ້ນອອກ ແລ້ວມອບໃຫ້ກຳມະການກວດບົດຕໍ່ໄປ.

(5.10) ຖ້າພົບເຫັນນັກສອບເສັງຊັກຖາມ ຫລືກ່າຍກັນຕ້ອງຕັກເຕືອນຫລືຍ້າຍບ່ອນນັ່ງທີ່ສາມາດຕິດຕາມໄດ້ງ່າຍ.

(5.11)ຖ້າພົບເຫັນນັກສອບເສັງເຊື່ອງຊ້ອນເອົາຫົວບົດເຂົ້າໄປກ່າຍໃນຫ້ອງສອບເສັງຕ້ອງຕັກເຕືອນ ໃນກໍລະນີໜັກທີ່ສຸດ ໃຫ້ຢຸດການສອບເສັງວິຊານັ້ນໂດຍທັນທີ ແລ້ວຂຽນບັນທຶກໃສ່ຫົວບົດນັ້ນ ດ້ວຍບິກສີແດງ ເຊັນກຳກັບໄວ້,ຈາກນັ້ນຕ້ອງສະເໜີລາຍງານຄະນະກຳມະການຊີ້ນຳສູນສອບເສັງແລະຄະນະກຳມະການຊີ້ນຳລວມໂດຍດ່ວນເພື່ອຊອກຫາວິທີດຳເນີນການຕໍ່ໄປ.

(6) ກຳມະການກວດບົດສອບເສັງມີສິດ ແລະ ໜ້າທີ່ດັ່ງນີ້:

(6.1) ຕ້ອງເອົາໃຈໃສ່ ກວດບົດຕອບຢ່າງລະອຽດ,ຊັດເຈນ ແລະ ຍຸດຕິທຳ.

(6.2) ຕ້ອງໃຫ້ຄະແນນຕາມຂັ້ນຕອນການແກ້ບັນຫາ ແລະ ຂຽນຄະແນນໃສ່ແຕ່ລະຂໍ້

(6.3) ບໍ່ຄວນໃຫ້ ຫລື ຕັດຄະແນນຄຳຕອບໂດຍອັດຕະໂນມັດ ເຊັ່ນ ເຫັນຄຳຕອບສຸດທ້າຍຖືກ ຫລື ຜິດແລ້ວໃຫ້ຄະແນນ ຫລື ຕັດຄະແນນໂລດ ໂດຍບໍ່ພິຈາລະນາຂັ້ນຕອນໃນການແກ້ບັນຫາ.

(6.4)ເມື່ອໃຫ້ຄະແນນແລ້ວຕ້ອງລົງຄຳເຫັນ ແລະ ເຊັນຊື່ຂອງຕົນໃສ່ໃນແຕ່ລະບົດຕອບນັ້ນ.

(6.5) ແຕ່ລະບົດຕອບຕ້ອງກວດຜ່ານກຳມະການຢ່າງໜ້ອຍ 2 ຄົນ, ຜູ້ທີ່ ນຶ່ງ ກວດແລ້ວໃຫ້ລົງຄະແນນໃສ່ບົດຕອບ ເປັນຂໍ້ໆໄປ,ແລ້ວໃຫ້ຜູ້ທີ່ ສອງ ກວດແລະໃຫ້ຄະແນນໃສ່ບົດຕອບເປັນຂໍ້ໆໄປເຊັ່ນດຽວກັນ. ຖ້າມີບັນຫາບໍ່ຈະແຈ້ງ ກໍ່ໃຫ້ສົນທະນາຕົກລົງຄະແນນແຕ່ລະຂໍ້ກັບທີ່, ຫລັງຈາກນັ້ນລວມຄະແນນທັງໝົດໃສ່ບົດຕອບ ພ້ອມລົງລາຍເຊັນຂອງກຳມະການກວດບົດທັງສອງ.

(6.6 ) ເມື່ອກວດສຳເລັດແລ້ວ ,ສົ່ງບົດຕອບໃຫ້ຫົວໜ້າໜ່ວຍວິຊາກວດກາຄວາມຖືກຕ້ອງເພື່ອສົ່ງຕໍ່ໃຫ້ກອງເລຂານຸການ ຫລື ຄະນະປະທານ.

(6.7) ໃນການບັນທຶກຄະແນນໃສ່ປຶ້ມບັນທຶກຄະແນນ,ໃຫ້ກຳມະການຕໍ່ຫົວຂວັ້ນໃສ່ໃບເຈັ້ຍຕອບນັກສອບເສັງແລ້ວ, ໃຫ້ຈົດຄະແນນເປັນລາຍວິຊາໃສ່ປຶ້ມບັນທຶກຄະແນນ ທັງສາມຫົວ ພ້ອມກັນ,ພາຍໃຕ້ການດູແລຄວບຄຸມຂອງກອງເລຂານຸການ ຫລື ປະທານ ຫລືຜູ້ແທນຈາກກະຊວງສຶກສາທິການ (ກໍລະນີ ສອບເສັງຈົບຊັ້ນ ມ.6 ) ໃນໄລຍະພັກຊົ່ວຄາວໃຫ້ກອງເລຂານຸການ ຫລື ປະທານ ຮັກສາປຶ້ມບັນທຶກຄະແນນໄວ້2 ຫົວ, ອີກ1ຫົວໃຫ້ຜູ້ແທນຈາກກະຊວງສຶກສາທິການເປັນຜູ້ຮັກສາໄວ້ ນັບແຕ່ມື້ເລີ່ມບັນທຶກຄະແນນເຂົ້າປຶ້ມ, ຈົນເຖິງມື້ຕັດສິນຜົນການສອບເສັງ ແລ້ວຖືໄປຍັງກົມສາມັນສຶກສາ ,ກະຊວງສຶກສາທິການ.

2. ຫລັກການຕັດສິນຜົນຂອງການສອບເສັງ .

2.1ສໍາຫລັບ ຊັ້ນປະຖົມ( ຊັ້ນ ປ5).ຖ້າຜູ້ໃດຖືກ1 ໃນ 3 ເງື່ອນໄຂ ລຸ່ມນີ້ຖືວ່າເສັງໄດ້ (ນອກຈາກນີ້ຖືວ່າເສັງຕົກ )

* ເງື່ອນໄຂທີ່ 1 : ຜ່ານການສອບເສັງ ຖ້ານັກຮຽນ ຜູ້ໃດໄດ້ຄະແນນ 5 ຂຶ້ນ ໄປ ຫມົດທຸກວິຊາທີ່ສອບເສັງ ຖືວ່າເສັງໄດ້.

* ເງື່ອນໄຂທີ່ 2 : ຜ່ານການສອບເສັງ ຖ້ານັກຮຽນ ຜູ້ໃດມີຫນຶ່ງວິຊາໄດ້ຄະແນນຫລຸດ 5 ແຕ່ບໍ່ຕໍ່າກວ່າ 3 ໃຫ້ເອົາຄະແນນວິຊາທີ່ສອບເສັງທັງຫມົດບວກເຂົ້າກັນ ແລ້ວຫານໃຫ້ຈໍານວນວິຊາສອບເສັງທັງຫມົດຖ້າຜົນສະເລ່ຍໄດ້ 5 ຂຶ້ນໄປຖືວ່າເສັງໄດ້.ໃຫ້ບັນທຶກຄະແນນວິຊາທີ່ບໍ່ໄດ້ຄາດຫມາຍຕາມຄະແນນຕົວຈິງ .

* ເງື່ອນໄຂທີ່ 3 : ຜ່ານການສອບເສັງ ຖ້ານັກຮຽນ ຜູ້ໃດຍັງມີຫນຶ່ງ ຫາສອງ ວິຊາ ໄດ້ຄະແນນຫລຸດ 5 ແຕ່ ບໍ່ຫລຸດ 2ໃຫ້ເອົາຄະແນນສະເລ່ຍຫມົດສົກຮຽນຂອງວິຊາທີ່ໄດ້ຄະແນນຫລຸດຄາດຫມາຍນັ້ນມາບວກຄະແນນສອບເສັງ ຖ້າຜົນບວກຂອງວິຊານັ້ນເທົ່າກັບ 10 ຂຶ້ນໄປຖືວ່າເສັງໄດ້ ແລະໃຫ້ບັນທຶກ ຄະແນນທີ່ບໍ່ໄດ້ຄາດຫມາຍ ນັ້ນຕາມຄະແນນຕົວຈິງ.

2.2 ສໍາຫລັບ ຊັ້ນມັດທະຍົມຕອນຕົ້ນ( ຊັ້ນ ມ.3 ).ຖ້າຜູ້ໃດຖືກ 1 ໃນ 3 ເງື່ອນໄຂ ລຸ່ມນີ້ຖືວ່າເສັງໄດ້ (ນອກຈາກນີ້ຖືວ່າເສັງຕົກ )

* ເງື່ອນໄຂທີ່ 1 : ຜ່ານການສອບເສັງ ຖ້ານັກຮຽນ ຜູ້ໃດໄດ້ຄະແນນ 5 ຂຶ້ນ ໄປ ຫມົດທຸກວິຊາທີ່ ສອບເສັງຖືວ່າເສັງໄດ້.

* ເງື່ອນໄຂທີ່ 2 : ຜ່ານການສອບເສັງ ຖ້ານັກຮຽນ ຜູ້ໃດມີຫນຶ່ງວິຊາໄດ້ຄະແນນຫລຸດ 5 ແຕ່ບໍ່ຕໍ່າກວ່າ3 ໃຫ້ເອົາຄະແນນວິຊາທີ່ສອບເສັງທັງໝົດບວກເຂົ້າກັນ ແລ້ວຫານໃຫ້ຈໍານວນວິຊາສອບເສັງທັງໝົດ ຖ້າຜົນສະເລ່ຍໄດ້5ຂຶ້ນໄປຖືວ່າເສັງໄດ້ ແລະ ໃຫ້ບັນທຶກຄະແນນວິຊາທີ່ບໍ່ໄດ້ຄາດໝາຍຕາມຄະແນນຕົວຈິງ.

* ເງື່ອນໄຂທີ່ 3 : ຜ່ານການສອບເສັງ ຖ້ານັກຮຽນຜູ້ໃດຍັງມີຫນຶ່ງ ຫາສອງວິຊາ ໄດ້ຄະແນນຫລຸດ 5 ແຕ່ບໍ່ຫລຸດ 2 ໃຫ້ເອົາຄະແນນສະເລ່ຍຫມົດ ສົກຮຽນຂອງ ວິຊາ ທີ່ໄດ້ຄະແນນຫລຸດ5ມາບວກຄະແນນສອບເສັງ ວິຊາທີ່ໄດ້ຄະແນນຫລຸດ5ນັ້ນ ຖ້າຜົນບວກຂອງວິຊານັ້ນໄດ້10ຂຶ້ນໄປ ຖືວ່າເສັງໄດ້ ແລະໃຫ້ບັນທຶກຄະແນນວິຊາທີ່ບໍ່ໄດ້ຄາດຫມາຍ ຕາມຄະແນນຕົວຈິງ.

2.3 ສໍາລັບຊັ້ນມັດທະຍົມຕອນປາຍ (ຊັ້ນ ມ.6) ).ຖ້າຜູ້ໃດຫາກຢູ່ໃນ 1 ໃນ 3 ເງື່ອນໄຂ ລຸ່ມນີ້ຖືວ່າເສັງໄດ້(ນອກຈາກນີ້ຖືວ່າເສັງຕົກ )

* ເງື່ອນໄຂທີ່ 1 : ຜ່ານການສອບເສັງແລ້ວ ຖ້ານັກຮຽນ ຜູ້ໃດໄດ້ຄະແນນ 5 ຂຶ້ນ ໄປ ຫມົດທຸກວິຊາທີ່ ສອບເສັງຖືວ່າເສັງໄດ້.

* ເງື່ອນໄຂທີ່ 2 : ຜ່ານການສອບເສັງຖ້ານັກຮຽນຜູ້ໃດ ມີຫນຶ່ງ ຫາສອງ ວິຊາໄດ້ ຄະແນນ ຫລຸດ 5 ແຕ່ບໍ່ຕໍ່າ

## ພາກທີ V
## ວິທີ ຈັດຕັ້ງປະຕິບັດ.

1. ໃຫ້ພະແນກສຶກສາປະຈຳແຂວງ, ກຳແພງນະຄອນແລະເຂດພິເສດ,ຫ້ອງການສຶກສາປະຈຳເມືອງໃນທົ່ວປະເທດ ຈັດຕັ້ງເຜີຍແຜ່ໃຫ້ນັກຮຽນ , ຄູ - ອາຈານ , ອຳນາດການປົກຄອງທ້ອງຖິ່ນ ແລະ ພໍ່ແມ່ປະຊາຊົນຮັບຊາບຢ່າງທົ່ວເຖິງກັນ.
2. ຫລັກການລວມສະບັບນີ້ ມີຜົນບັງຄັບໃຊ້ຢູ່ໃນ ໂຮງຮຽນ ສາມັນສຶກສາທົ່ວປະເທດທັງພາກລັດ ແລະ ພາກເອກະຊົນ.
3. ໃຫ້ພະແນກສຶກສາປະຈຳແຂວງ,ກຳແພງນະຄອນ ແລະ ເຂດພິເສດ ,ຈັດຕັ້ງປະຕິບັດລະຫລັກການລວມສະບັບນີ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ ຂໍ້ຄວາມຂອງຄຳສັ່ງ ທີ່ຂັດກັບລະຫລັກການລວມ ສະບັບນີ້ ລ້ວນແຕ່ຖືກລົບລ້າງ

ລັດຖະມົນຕີວ່າການກະຊວງສຶກສາທິການ.



ພິມມະສອນ ເລືອງຄຳມາ